ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ສຳເລັດກອງປະຊຸມຄົບຄະນະພັກ ທຫລ ຄັ້ງທີ 3 ສະໄໝທີ IV



ອົງຄະນະພັກທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ສຳເລັດກອງປະຊຸມຄົບຄະນະບໍລິຫານງານພັກ ທຫລ ຄັ້ງທີ 3 ສະໄໝທີ IV ໃນວັນທີ 5 ມີນາ 2021 ທີ່ຫ້ອງປະຊຸມ ທຫລ ນະຄອນຫຼວງວຽງຈັນ ພາຍໃຕ້ການເປັນປະທານຂອງສະຫາຍ ສອນໄຊ ສິດພະໄຊ ກຳມະການສູນກາງພັກ, ເລຂາຄະນະພັກ, ຜູ້ວ່າການ ທຫລ; ພ້ອມນີ້, ກໍ່ມີສະຫາຍຄະນະປະຈຳພັກ, ຄະນະພັກ, ຄະນະໜ່ວຍພັກ ແລະ ພາກສ່ວນກ່ຽວຂ້ອງເຂົ້າຮ່ວມ.

ກອງປະຊຸມໃນຄັ້ງນີ້; ສະຫາຍເລຂາຄະນະພັກ ທຫລ ໄດ້ເຜີຍແຜ່ໂດຍສັງເຂບຜົນສຳເລັດກອງປະຊຸມໃຫຍ່ຜູ້ແທນ ຄັ້ງທີ XI ຂອງພັກປະຊາຊົນ ປະຕິວັດລາວ ທີ່ຕິດພັນກັບຂະແໜງການທະນາຄານ; ນອກນີ້, ສະຫາຍຮອງເລຂາຄະນະພັກ ແລະ ບັນດາຄະນະພັກ ໄດ້ນຳສະເໜີຮ່າງບົດສະຫຼຸບຕີລາຄາການຊີ້ນຳ-ນຳພາ ວຽກງານຮອບດ້ານຂອງຄະນະບໍລິຫານງານພັກ ທຫລ ປະຈຳປີ 2020 ແລະ ທິດທາງແຜນການປີ 2021; ສະເໜີຮ່າງບົດສະຫຼຸບຕີລາຄາການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປະຈຳປີ 2020 ຂອງບັນດາໜ່ວຍພັກ ທີ່ຂຶ້ນກັບອົງຄະນະພັກ ທຫລ; ສະເໜີຮ່າງບົດສະຫຼຸບການປະເມີນຕີລາຄາການຈັດຕັ້ງປະຕິບັດຂໍ້ຕົກລົງຂອງຄະນະພັກ ທຫລ ວ່າດ້ວຍລະບຽບການຄຸ້ມຄອງພະນັກງານ-ລັດຖະກອນຢູ່ພາຍໃນການຈັດຕັ້ງທະນາຄານລັດ ແລະ ການລາຍງານໝາກຜົນຂອງການເຜີຍແຜ່ເອກະສານຜົນສຳເລັດກອງປະຊຸມໃຫຍ່ຜູ້ແທນອົງຄະນະພັກ ທຫລ ຄັ້ງທີ IV.

ໃນໂອກາດດັ່ງກ່າວ, ບັນດາຜູ້ແທນຂອງກອງປະຊຸມ ຍັງໄດ້ມີການປະກອບຄຳຄິດຄຳເຫັນຫຼາຍດ້ານ ໂດຍສະເພາະແມ່ນໄດ້ມີການປະກອບຄຳເຫັນຢ່າງຕົງໄປຕົງມາ ແລະ ພາວະວິໄສ ຕໍ່ຮ່າງບົດສະຫຼູບ 3 ສະບັບ ເພື່ອໃຫ້ມີເນື້ອໃນອຸດົມສົມບູນຍິ່ງໆຂຶ້ນ; ກອງປະຊຸມໄດ້ດຳເນີນມາເປັນເວລາໜຶ່ງວັນ ແລະ ໄດ້ຮັບຜົນສຳເລັດຢ່າງຈົບງາມ.

**# ຂ່າວ-ພາບ: ຣັດສະໝີ ດວງສັດຈະ**